ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 010 /ທຄຕລ.2017
ນະຄອນຫຼວງວຽງຈັນ, ວັນທີ: 19 JUL 2017

# ມະຕິຕົກລົງ

## ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

- ອີງຕາມໃບອະນຸຍາດ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນລາຍເດີມ ເລກທີ 009/ສຄຄຊ ລົງວັນທີ 17/07/2017.
- ອີງຕາມການຄົ້ນຄວ້າ ແລະ ການເຫັນດີເປັນເອກະພາບຂອງ ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຄັ້ງວັນທີ 19/07/2017.
- ອີງຕາມການເຫັນດີເປັນເອກະພາບຂອງສະມາຊິກສະພາບໍລິຫານ ຕາມຈົດໝາຍວຽນ ເລກທີ 009/ສພຫ.ທຄຕລ.2017 ລົງວັນທີ 19/07/2017.

**ປະທານສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ:**

ມາດຕາ 1: ເຫັນດີຮັບຮອງເອົາ ວັນທີ 18/8/2017 ເປັນມື້ຂຶ້ນເຄື່ອງໝາຍອະສິດຜູ້ຖືຮຸ້ນ (XR) ກຳນົດສິດສອງຮຸ້ນເດີມຕໍ່ໜຶ່ງຮຸ້ນໃໝ່ (2:1).

ມາດຕາ 2: ເຫັນດີຮັບຮອງເອົາ ມື້ຈອງຊື້ຮຸ້ນ:

- ວັນທີ 28-30/8/2017 ມື້ເປີດຈອງຊື້ຮຸ້ນຕາມສິດຂອງຜູ້ຖືຮຸ້ນເດີມ (RO) ຈຳນວນຮຸ້ນ: 68.288.600 ຮຸ້ນ ໃນລາຄາ: 5.050 ກີບ/ຮຸ້ນ.
- ວັນທີ 31/8-1/9/2017 ມື້ເປີດຈອງຊື້ຮຸ້ນສຳຫຼັບມວນຊົນທົ່ວໄປ (PO) ຈຳນວນຮຸ້ນ: 2.857.100 ຮຸ້ນ ໃນລາຄາ: 5.300 ກີບ/ຮຸ້ນ

ມາດຕາ 3: ເຫັນດີຮັບຮອງເອົາ ວັນທີ 15/9/2017 ເປັນມື້ຈົດທະບຽນຮຸ້ນສາມັນເພີ່ມທຶນໃນຕະຫຼາດຫຼັກຊັບລາວ.

ມາດຕາ 4: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາບໍລິຫານ**
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປອ. ບຸນເຫຼືອ ສິນໄຊວໍຣະວົງ